

## ຂໍ້ດີ

1. ປະຫຍັດຕົ້ນທຶນສຳລັບຜູ້ຜະລິດ
2. ບໍ່ເປັນອັນຕະລາຍຕໍ່ຜູ້ຜະລິດ ແລະ ຜູ້ບໍລິໂພກ
3. ເປັນມິດຕໍ່ສິ່ງແວດລ້ອມ
4. ປະສິດທິພາບສູງຖ້າສົມທຽບໃສ່ລາຄາ

## ຄຳແນະນຳ

- ລະມັດລະວັງໃນການໃຊ້ສູດເຫຼົ່ານີ້, ຄວນໃສ່ຜ້າປິດປາກ-ດັງ ເພື່ອປ້ອງກັນອາການວິນຫົວ ເພາະບາງສູດບາງມີກິ່ນຂ້ອນຂ້າງຮຸນແຮງ.
- ຄວນປະຕິບັດຕາມຄຳແນະນຳ ໃນການການເກັບກ່ຽວຜັກຕາມສູດທີ່ກຳນົດໄວ້.
- ຍິ່ງທ່ານໃຊ້ສ່ວນປະກອບຫຼາຍຂຶ້ນ, ໃນຂະນະທີ່ປະຕິບັດຕາມວິທີການກຽມ ແລະ ການໃຊ້ງານຢ່າງໃກ້ຊິດເທົ່າທີ່ຈະເປັນໄປໄດ້, ຜົນໄດ້ຮັບສຳລັບສວນຂອງທ່ານກໍ່ຈະຍິ່ງມີປະສິດທິພາບຫຼາຍຂຶ້ນ.




**ຜູ້ແຕ່ງ**

- **ທ່ານ ຊໍທໍ ຊາວຈາ,** ຜູ້ບໍລິຫານໂຄງການ (ສພກ.ຂ) <icdienglish9@gmail.com >
- **ທ່ານ ນາງ ສົດສຸດາ ອຸດົມສຸກ,** ສກອປ <osodsuda@yahoo.com>


**ວັນທີເຜີຍແຜ່: ມີນາ 2026**



**ທ່ານ ນາງ ສົດສຸດາ** ອຸດົມສຸກ ຈາກສະຫະກອນກະສິກຳອິນຊີເມືອງແປກ (POCA) ໄດ້ຮີບໂຮມເອົາບັນດາຄວາມຮູ້ ແລະ ສູດການຜະລິດທີ່ຖອດຖອນໄດ້ຈາກຕົວຈິງ ໃນການເຮັດຢາປາບສັດຕູພືດທຳມະຊາດ ແລະ ຝຸ່ນຊີວະພາບ. ຄວາມຊ່ຽວຊານເຫຼົ່ານີ້ ແມ່ນໄດ້ມາຈາກການເຮັດວຽກຕົວຈິງຮ່ວມກັບຊາວກສິກອນຕົວແບບ, ບັນດາໂຄງການຊ່ວຍເຫຼືອຕ່າງໆ ແລະ ບົດຮຽນອັນລ້ຳຄ່າຈາກອາສາສະໝັກສາກົນ ທີ່ໄດ້ມາເຮັດວຽກຮ່ວມກັບ POCA.

ຈາກຜົນງານດັ່ງກ່າວ, ເພິ່ນໄດ້ຮຽບຮຽງເປັນຄູ່ມືທາງດ້ານເຕັກນິກທີ່ຄົບຖ້ວນ ເພື່ອແນໃສ່ສົ່ງເສີມກະສິກຳແບບຍືນຍົງ ແລະ ຊ່ວຍເຫຼືອຊາວກສິກອນທີ່ມີຄວາມມຸ່ງໝັ້ນ ແລະ ອົດທົນ. ການປ່ຽນຈາກການນຳໃຊ້ສານເຄມີ ຫັນມານຳໃຊ້ທາງເລືອກແບບທຳມະຊາດນີ້ ແມ່ນເພື່ອເຮັດໃຫ້ການເຮັດນາ-ເຮັດສວນ ມີຄວາມປອດໄພທັງຕໍ່ຜູ້ຜະລິດ ແລະ ຜູ້ບໍລິໂພກ, ທັງເປັນການປົກປັກຮັກສາສິ່ງແວດລ້ອມໄປພ້ອມໆກັນ.

ວິທີການທຳມະຊາດເຫຼົ່ານີ້ເໝາະສົມທີ່ສຸດຕໍ່ຊາວກະສິກອນ ເພາະວ່າ: ມີຕົ້ນທີ່ຕ່ຳ, ດີຕໍ່ສຸຂະພາບ, ແລະ ເປັນມິດກັບສິ່ງແວດລ້ອມ. ນີ້ຖືເປັນແນວທາງທີ່ນຳໃຊ້ໄດ້ຈິງ ໃນການກ້າວໄປສູ່ການເຮັດກະສິກຳແບບຍືນຍົງໃນອະນາຄົດ.

www.ali-sea.org

**ທີມງານອາລິເຊຍ**


- ຜູ້ປະສານງານຂັ້ນພາກພື້ນ: **ລູຊີ ເຣໂນ** <reynaud@gret.org>
- ກອງເລຂາອາລິເຊຍ ປະຈຳລາວ: **ສຸຕິມາ ບຸດວິເສດ** <soutima2506@gmail.com>



ສະໜັບສະໜູນໂດຍ: Agroecology and Safe Food System Transitions

ປະສານງານໂດຍ: GRET, cirad

ສະໜັບສະໜູນທຶນໂດຍ: In partnership with République Française AFD Agence Française de Développement; Co-funded by the European Union; Fonds Français pour l'Environnement Mondial

ເອກະສານນີ້ສ້າງຂຶ້ນໂດຍການສະໜັບສະໜູນດ້ານການເງິນຈາກອົງການຝຣັ່ງເພື່ອການພັດທະນາ (AFD), ສະຫະພາບເອີຣົບ (EU) ແລະ ກອງທຶນຝຣັ່ງເພື່ອສິ່ງແວດລ້ອມໂລກ (FFEM). ທັດສະນະທີ່ສະແດງອອກໃນເອກະສານສະບັບນີ້ຈະບໍ່ຖືວ່າເປັນການສະແດງທັດສະນະທີ່ເປັນທາງການຂອງ ອົງການ AFD, EU ແລະ FFEM.




ALiSEA AGROECOLOGY LEARNING ALLIANCE IN SOUTH EAST ASIA

# ແຜ່ນພັບດ້ານວິຊາການ
# ເຕັກນິກການຜະລິດສະໝູນໄພໄລ່ແມງໄມ້ 1/2

ພື້ນທີ່ຈັດຕັ້ງປະຕິບັດ

ບ້ານແສນດິນ, ຮ່ອງງົວ, ໂພນມ່ວງ, ນາຂ່າ ແລະ ນານາດ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ

| ລະບົບນິເວດກະສິກຳ: | | | | |
|---|---|---|---|---|
| ເຂດ | ກິດຈະກຳຫຼັກ | ສະພາບອາກາດ | ປະລິມານນ້ຳຝົນ | ອຸນຫະພູມ |
| ທົ່ງພຽງ | ປູກເຂົ້າ/ ປູກຜັກ | ເຂດອາກາດຮ້ອນຊຸ່ມຕາມລະດູການ (ລະດູຝົນ ເດືອນ ມິຖຸນາ - ຕຸລາ) | ~ 1300 ມມ/ປີ | ສະເລ່ຍສູງສຸດ: 35°C - ສະເລ່ຍຕ່ຳສຸດ: 14°C |

## ສູດປ້ອງກັນແມງໄມ້ (BE5)



### ສ່ວນປະກອບ

- ເຫຼົ້າຂາວປຸກໆ 2 ແກ້ວ.
- ນ້ຳສົ້ມສາຍຊູ 5% 1 ແກ້ວ.
- ນ້ຳຕານຊາຍແດງ 1 ແກ້ວ.
- ນ້ຳສະກັດຊີວະພາບ 1 ແກ້ວ.
- ຊັນໄລ ຫຼື ສະບູ່ 1 ບ່ວງ

### ຂັ້ນຕອນ

1. **ການຜະລິດ:** ປະສົມສ່ວນປະກອບທັງໝົດລົງໃນພາຊະນະ ແລະ ໝັກໄວ້ປະມານ 24 ຊົ່ວໂມງ ກ່ອນນຳໄປໃຊ້. ບໍ່ຄວນໃຫ້ຖືກແສງແດດໂດຍກົງ. ສາມາດເກັບຮັກສາໄດ້ດົນເຖິງ 1 ປີ.

### ການນຳໃຊ້

- ການນຳໃຊ້: ໃຊ້ນ້ຳຢາໄລ່ແມງໄມ້ (BE5) ຈຳນວນ 2 ບ່ວງ ປະສົມກັບນ້ຳ 10 ລິດ
- ນ້ຳທີ່ປະສົມແລ້ວ 10 ລິດ ແມ່ນໃຊ້ສີດພົ່ນໄດ້ໃນເນື້ອທີ່ປະມານ 20 ຕາແມັດ (ຂຶ້ນກັບປະເພດຂອງຈັກສີດ ຫຼື ບົວຫົດທີ່ນຳໃຊ້).
- ໃຊ້ສີດພົ່ນເພື່ອປ້ອງກັນແມງໄມ້ທຸກຊະນິດທີ່ທຳລາຍຜັກ ແລະ ຕົ້ນໄມ້. ໃຊ້ຕິດຕໍ່ກັນ 3 ມື້, ມື້ລະ 1 ຄັ້ງ. ໃນກໍລະນີສີດເພື່ອປ້ອງກັນ, ຄວນໃຊ້ອາທິດລະ 1 ຄັ້ງ, ຄວນສີດໃນຕອນແລງ ທີ່ບໍ່ມີແສງແດດກ້າ ແລະ ໃຫ້ໝັ່ນຕິດຕາມເບິ່ງຄວາມເສຍຫາຍຈາກແມງໄມ້. ຖ້າແມງໄມ້ອອກມາກັດກິນໃນຕອນກາງຄືນ, ໃຫ້ສີດພົ່ນໃນຕອນແລງ, ຖ້າແມງໄມ້ອອກມາກັດກິນໃນຕອນກາງເວັນ, ໃຫ້ສີດພົ່ນໃນຕອນເຊົ້າ.

## ສູດປ້ອງກັນ ຫລື ປາບໝັດດິນ



### ສ່ວນປະກອບ

- ກະທຽມແຫ້ງ: 1 ກຼາມ
- ດອກສາມສີ: 1 ກິໂລກຼາມ
- ຂ່າ : 1 ກຼາມ
- ເຄືອເຂົາຮໍ: 5 ກຼາມ
- ຂີງ : 1ກຼາມ
- ດອກດາວເຮືອງ: 2 ກຳມື
- ໝາກພິກໄທ : 1 ກຼາມ
- ນ້ຳສະອາດ: 2 ລິດ
- ຫມາກເຜັດ: 5 ກຼາມ
- ໃບຍົມ: 1 ກິໂລກຼາມ

### ຂັ້ນຕອນ

- ຕຳ ແລະ ຊອຍສະໝຸນໄພທັງໝົດໃຫ້ລະອຽດ, ຈາກນັ້ນຄົນໃຫ້ເຂົ້າກັນດີ. ຈາກນັ້ນ ຕື່ມນ້ຳລົງໄປ, ຖ້ານ້ຳ 2 ລິດ ຫາກຍັງບໍ່ທັນຖ້ວມສ່ວນປະກອບທັງໝົດ ແມ່ນສາມາດຕື່ມນ້ຳໃສ່ຕື່ມອີກໄດ້ (ໃຫ້ພໍດີຖ້ວມສະໝຸນໄພ). ອັດຝາໃຫ້ແຈບ ແລະ ໝັກເປັນເວລາ 24 ຊົ່ວໂມງກ່ອນນຳໄປໃຊ້.

### ການນຳໃຊ້

1. ໃຊ້ສານສະກັດສະໝຸນໄພ 1 ລິດ ປະສົມກັບນ້ຳສະອາດ (ນ້ຳປະປາ ຫຼື ນ້ຳໃສ) 10 ລິດ. ໃຫ້ສີດພົ່ນໃນຕອນແລງ ຕິດຕໍ່ກັນ 2-3 ວັນ ຈົນກວ່າຈະບໍ່ເຫັນຕົວໝັດດິນອີກ.
2. ບໍ່ຄວນເກັບຮັກສາໄວ້ດົນເກີນ 2-3 ວັນ ເພາະສານສະກັດຈະເສື່ອມຄຸນນະພາບ (ໝົດອາຍຸ) ເຮັດແລ້ວໃຫ້ຟ້າວນຳໃຊ້ທັນທີ.

## ສູດປ້ອງກັນສັດຕູພືດທົ່ວໄປ



### ສ່ວນປະກອບ

- ໃບດອກຮັກ
- ໃບດອກຈຳປາ
- ໃບໝາກຫຸ່ງສາ
- ໃບດອກສາມສີ
- ໃບຂົມກະເດົາ ຫຼື ເມັດ
- ໃບຫຍ້າຊຸນລາ
- ເຄືອເຂົາຮໍ
- ໃບພູ

=> ສ່ວນປະສົມທັງໝົດຂ້າງເທິງນີ້ ຕ້ອງມີນ້ຳໜັກ 1 ກິໂລກຣາມ

- ຂີ້ງົວສົດ 1 ກຳມື
- ນ້ຳສະອາດ 10 ລິດ
- ຖັງບັນຈຸນ້ຳ 13 ລິດ ຫຼື ຫຼາຍກວ່ານັ້ນ

### ຂັ້ນຕອນ

- ຊອຍ ຫຼື ຟັກສ່ວນປະກອບທັງໝົດໃຫ້ເປັນຕ່ອນນ້ອຍໆ. ຊັ່ງສ່ວນປະກອບທີ່ຟັກແລ້ວໃຫ້ໄດ້ນ້ຳໜັກ 1 ກິໂລກຣາມ (ໃນກໍລະນີທີ່ຫາສະໝຸນໄພບໍ່ຄົບ, ຖ້າມີບໍ່ຮອດ 5 ຊະນິດ ກໍຍັງສາມາດເຮັດໄດ້ຄືກັນ). ເທສ່ວນປະກອບທັງໝົດລົງໃນພາຊະນະທີ່ກຽມໄວ້, ຈາກນັ້ນຕື່ມເຂົ້າ (ເຂົ້າສຸກ ຫຼື ເຂົ້າສານ) ແລະ ຂີ້ງົວລົງໄປ ແລ້ວຄົນໃຫ້ເຂົ້າກັນດີ. ໝັກປະໄວ້ເປັນເວລາ 5 ວັນ. ໃນລະຫວ່າງການໝັກ, ໃຫ້ ຄົນສ່ວນປະສົມ 1 ຄັ້ງຕໍ່ມື້.

### ການນຳໃຊ້

1. ໃຊ້ສານສະກັດສະໝຸນໄພ 1 ລິດ ປະສົມກັບນ້ຳ 3 ລິດ ໃຫ້ສີດພົ່ນຕິດຕໍ່ກັນ 3 ວັນ, ມື້ລະ 1 ຄັ້ງ. ກໍລະນີສີດເພື່ອປ້ອງກັນ ໃຫ້ສີດ 1 ຄັ້ງຕໍ່ອາທິດ.
2. ຫຼັງຈາກໝັກຄົບກຳນົດແລ້ວ ສາມາດເກັບໄວ້ໃຊ້ໄດ້ພຽງ 2 ວັນ ເທົ່ານັ້ນ. ຫ້າມສີດພົ່ນຕິດຕໍ່ກັນເກີນ 1 ອາທິດ ເພາະຈະເຮັດໃຫ້ຜັກຕາຍໄດ້.